ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ພິທີ ມອບ-ຮັບ ໜ້າທີ່ ຜູ້ອໍານວຍການໃຫຍ່ ຕະຫຼາດຫຼັກຊັບລາວ ລະຫວ່າງ ຜູ້ໃໝ່ ແລະ ຜູ້ເກົ່າ




ໃນຕອນເຊົ້າຂອງວັນທີ 3 ສິງຫາ 2022 ທີ່ ຕະຫຼາດຫຼັກຊັບລາວ (ຕລຊລ) ໄດ້ຈັດຕັ້ງພິທີ ມອບ-ຮັບ ໜ້າທີ່ຜູ້ອໍານວຍການໃຫຍ່ ຕະຫຼາດຫຼັກຊັບລາວ ລະຫວ່າງ ຜູ້ເກົ່າ ແລະ ຜູ້ໃໝ່ ຂຶ້ນ, ໂດຍການໃຫ້ກຽດເປັນປະທານຂອງທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ) ພ້ອມດ້ວຍການເຂົ້າຮ່ວມຂອງຄະນະນໍາ ທຫລ, ບໍລິສັດຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ພາຍໃນພິທີ ທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າຫ້ອງການ ທຫລ, ປະທານສະພາບໍລິຫານ ຕລຊລ ໄດ້ຂຶ້ນຜ່ານຂໍ້ຕົກລົງຂອງສະພາບໍລິຫານ ຕລຊລ ວ່າດ້ວຍການແຕ່ງຕັ້ງ ແລະ ຍົກຍ້າຍ ພະນັກງານ, ໂດຍໄດ້ແຕ່ງຕັ້ງ ທ່ານ ສຸພັກ ຖິ່ນໄຊພອນ ເປັນຜູ້ອໍານວຍການໃຫຍ່ ຕລຊລ ຜູ້ໃໝ່ ແລະ ຍົກຍ້າຍ ທ່ານ ນາງ ສາຍສະໝອນ ຈັນທະຈັກ ຜູ້ອໍານວຍການໃຫຍ່ ຕລຊລ ຜູ້ເກົ່າ ໄປຮັບໜ້າທີ່ໃໝ່ ເປັນຜູ້ອໍານວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.







ຫຼັງຈາກນັ້ນ, ໄດ້ມີພິທີເຊັນບົດບັນທຶກ ມອບ-ຮັບ ໜ້າທີ່ ຜູ້ອຳນວຍການໃຫຍ່ ຕລຊລ ໂດຍການໃຫ້ກຽດເປັນພະຍານຂອງທ່ານ ຮອງຜູ້ວ່າການ ທຫລ ແລະ ເນື່ອງໃນໂອກາດອັນສະຫງ່າລາສີນີ້ ທ່ານຮອງຜູ້ວ່າການ ທຫລ ກໍ່ໄດ້ໃຫ້ກຽດໂອ້ລົມຕໍ່ກັບການ ມອບ-ຮັບ ໜ້າທີ່ດັ່ງກ່າວ ໂດຍຮຽກຮ້ອງໃຫ້ການນຳຂອງ ຕລຊລ ຈົ່ງໄດ້ບຸກບືນສ້າງຄວາມເຂັ້ມແຂງໃຫ້ແກ່ ຕລຊລ ໃຫ້ໄດ້ຮັບໝາກຜົນທີ່ດີຂຶ້ນກວ່າເກົ່າ.




# ຂ່າວ-ພາບ: ວັນປະເສີດ ສີມບູນຂັນ.